S D
C S

San Diego City Schools

_________________________________ ຊັ້ນຮຽນ:_________

ພິມຊື່ຂອງນັກຮຽນ

# <u>ປະກາດ ນະໂຍບາຍມາຕະການບໍ່ໂຍະຍານ</u>

ສະພາສູນກາງສຶກສາໄດ້ອະນຸມັດໃຊ້ນາໂຍບາຍມາຕະການບໍ່ໂຍະຍານດັ່ງຕໍ່ໄປນີ້:

- ການໃຊ້, ຄອບຄອງ ຫລື ແບອາວຸດຈະຖືກພິຈາຣາບາໄລ່ອອກໂຮງຮຽນ. ທີ່ຖືວ່າອາວຸດນັ້ນ, ບໍ່ຈຳກັດໃສ່ແຕ່, ປືນ, ປືນປອມ, ປືນໃຊ້ສັນຍານຫລິ້ນກິລາ, ປືນໄຟຟ້າຊັອດ, ປືນລູກເຈັ້ຍ, ມີດທຸກຂນາດ/ທຸກຊະນິດ, ດາບງ້າວ, ມີດສອງຄົມ, ມີດແຖ, ຫມາກກະຖຸນ, ຣະເບີດ ຫລື ກະໂພກ/ບັ້ງໄຟຕ່າງໆ. ວັດຖຸທຸກຢ່າງທີ່ໃຊ້ໃຫ້ເປັນອັນຕລາຍຈະຖືວ່າເປັນອາວຸດອັນນຶ່ງຄືກັນ.
- ການຕ່ອຍຕີກັນປະຈຳ, ການກະທຳທີ່ຮ້າຍແຮງ, ຫລື ທຳບາດເຈັບຮ້າຍແຮງແກ່ຄົນອື່ນ ຈະຖືກພິຈາຣະນາໄລ່ອອກ.
- ການພຍາຍາມ ເພື່ອກະທຳ ຫລື ທຳຮ້າຍ ແລະ ທຸບຕີ ເພື່ອທາງເພດ.
- ສູນກາງສຶກສາພວກເຮົາມີນະໂຍບາຍຫ້າມບໍ່ໃຫ້ໃຊ້ ເຫລົ້າ, ຢາສູບ, ຫລື ຢາເສບຕິດອື່ນໆ. ຖ້າໄດ້ພົບເຫັນເຈົ້າ ຂາຍ, ເອົາໃຫ້, ຫລື ຄອບຄອງ ຢາເສບຕິດໃຫ້ໂທດທີ່ຫລວງຄວບຄຸມ/ຫວງຫ້າມເກີນຈຳນວນທີ່ອະນຸຍາດໃຫ້ໃຊ້ສ່ວນຕົວນັ້ນ ເຈົ້າຈະ
ຖືກພິຈາຣະນາໄລ່ອອກໂຮງຮຽນຖານຜິດຄັ້ງທີນຶ່ງ. ຖ້າຄອບຄອງຫລື ໃຊ້ຢາເສບຕິດໃຫ້ໂທດນັ້ນ ເຈົ້າຈະຖືກພິຈາຣະນາໄລ່ອອກໂຮງຮຽນຖານຜິດຄັ້ງທີສາມ, ຍົກເວັ້ນຄວາມຜິດທາງດ້ານຢາສູບ; ຖ້າພົບເຫັນເຈົ້າຄອບຄອງຢາສູບນັ້ນ ເຈົ້າຈະຖືກພິຈາຣະນາໄລ່ອອກໂຮງຮຽນໃນຖານຜິດຄັ້ງທີສີ່.
- ເພີ້ມຈາກການປະຕິບັດລະບຽບວິນັຍນີ້, ຖ້າພົບເຫັນເຈົ້າລະເມີດກົດຫມາຍນີ້ ເຈົ້າຈະຖືກຈັບກຸມ ແລະ ສົ່ງເຂົ້າຄຸກກັກຂັງເຍົາວະຊົນ.
- ການຖືກໄລ່ອອກໂຮງຮຽນເຂດສຶກສາແຊນດີເອໂກນີ້ ອາດມີຜົນສະທ້ອນເຮັດໃຫ້ເຈົ້າເສັຍສິດທິ ໃນການມາເຂົ້າໂຮງຮຽນ ຫລື ເຂົ້າຮຽນຫລັກສູດພິເສດຕ່າງໆ. ເຈົ້າອາດຈະຖືກສົ່ງເຂົ້າຮຽນໂຮງຮຽນສຳລອງ ຫລື ໂຄງການສຳລອງຕ່າງໆ.
- ນະໂຍບາຍມາຕະການບໍ່ໂຍະຍານໄດ້ຮຽກຮ້ອງໃຫ້ທຳການພິຈາຣະນາໄລ່ອອກໂຮງຮຽນ ເມື່ອມີການກະທຳຜິດເກີດຂຶ້ນໃນເຂດໂຮງຮຽນ ຫລື ໃນກິຈກັມຕ່າງໆຂອງໂຮງຮຽນ, ຈະແມ່ນໃນເຂດໂຮງຮຽນ ຫລື ນອກເຂດໂຮງຮຽນກໍຕາມ.
- ການໄລ່ອອກໂຮງຮຽນນີ້ອາດຈະຖືກພິຈາຣະນາໃຫ້ໄລ່ອອກໃນການທຳຜິດທີ່ເກີດຂຶ້ນໃນລະຍະກິນອາຫານທ່ຽງ–ນອກເຂດໂຮງຮຽນ, ແລະໃນລະຍະເວລາ, ຫລືໃນຂະນະກຳລັງອອກໄປ ຫລື ກັບເຂົ້າມາຈາກກິຈກັມຕ່າງໆທີ່ໂຮງຮຽນຈັດຂຶ້ນ.

ນະໂຍບາຍມາຕະການບໍ່ໂຍະຍານນີ້ນຳໃຊ້ເພື່ອເຮັດໃຫ້ສະພາບແວດລ້ອມໂຮງຮຽນຂອງເຈົ້າມີຄວາມປອດພັຍ ແລະ ເພື່ອໃຫ້ສະພາບແວດລ້ອມໃນການຮຽນຖືກຕ້ອງເຫມາະສົມດີສຳຫລັບເຈົ້າ ແລະ ພວກນັກຮຽນຄົນອື່ນໆ. ຈະບໍ່ອະນຸຍາດໃຫ້ມີເຫດຜົນໃດໆມາລະເມີດລົບກວນກົດລະບຽບເຫລົ່ານີ້ໂດຍເດັດຂາດ.

ພວກຂ້າພະເຈົ້າຮັບຮູ້ວ່ານັກຮຽນໄດ້ອ່ານ ແລະ ເຂົ້າໃຈໃນນະໂຍບາຍມາຕະການບໍ່ໂຍະຍານນີ້ແລ້ວ. ປະກາດອັນນີ້ໄດ້ຖືກອະທິບາຍແກ່ນັກຮຽນແລ້ວ ແລະ ພວກຂ້າພະເຈົ້າຮັບຮູ້ເຖິງໂທດຕ່າງໆໃນການກະທຳຂອງນັກຮຽນ ເມື່ອເຂົາເຈົ້າລະເມີດຕໍ່ນະໂຍບາຍເຫລົ່ານີ້.

_______________________ ລາຍເຊັນພໍ່ແມ່

_______________________ ລາຍເຊັນນັກຮຽນ

_______________________ ວັນທີ